ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 027 / ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 28 APR 2023

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ປະຈຳປີ 2022

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022..

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີລາວມະຫາຊົນ (ວຈຊຕ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນ ວັນທີ 28 ເມສາ 2023 ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 32 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າມາດ້ວຍຕົນ ເອງຈຳນວນ 21 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທ່ນຈຳນວນ 11 ທ່ານ ເຊິ່ງຖືຮຸ້ນລວມທັງໝົດ 143.515.100 ຮຸ້ນ ຫຼື ເທົ່າກັບ 97 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງ ວຈຊຕ, ໂດຍກອງ ປະຊຸມໄດ້ມີມະຕິດັ່ງນີ້:

<u>ວາລະທີ 01: ຮັບຊາບການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021</u>

- ວາລະນີ້ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມ ປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈຳປີ 2022 ຂອງບໍລິສັດ ວຈຊຕ.

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ວາລະທີ 04: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ແຜນການດຳເນີນທຸລະກິດປີ 2023

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ວາລະທີ 05: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2022 ຂອງບໍລິສັດ ວຈຊຕ.

ກອງປະຊຸມໄດ້ລົງມະຕິເຫັນດີແຜນການຈ່າຍເງິນປັນຜົນປະຈຳປີ 2022 ດັ່ງນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາ 02/05/2023 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 23/05/2023;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ວາລະທີ 06: ຮັບຊາບການລາຍງານການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.

- ວາລະນີ້ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

<u>ວາລະທີ 07: ພິຈາລະນາ ແລະ ຮັບຮອງລາຍການທີ່ກ່ຽວພັນ ເຊິ່ງ ບໍລິສັດ ວຈຊຕ ຈະຮັບຊື້ຊັບສິນໃນຕຶກສຳນັກງານ ຂອງ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນ ໝອງຈັນຕອນເໜືອ ຈຳກັດ.</u>

ກອງປະຊຸມໄດ້ລົງມະຕິເຫັນດີ ວຈຊຕ ຮັບຊື້ຊັບສິນໃນຕຶກສຳນັກງານ ຂອງ ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນ ໝອງຈັນຕອນເໜືອ ຈຳກັດ ລາຄາຕໍ່ຫົວໜ່ວຍໂດຍບໍ່ລວມອາກອນມູນຄ່າເພີ່ມ ແມ່ນ 2.376,49 ໂດລາສະຫະລັດ/㎡ ເນື້ອທີ່ຈະຮັບຊື້ທັງໝົດແມ່ນ 236.81 ㎡.

ຍ້ອນບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນ ໝອງຈັນຕອນເໜືອ ຈຳກັດ ບໍ່ມີສິດລົງຄະແນນສຽງກ່ຽວກັບວາລະນີ້ ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ ດັ່ງນີ້:

- ເຫັນດີ 47.515.900 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

<u>ວາລະທີ 08: ພິຈາລະນາ ແລະ ຮັບຮອງການປັບປ່ຽນສະມາຊິກສະພາບໍລິຫານສະໄໝທີ 3.</u>

ກອງປະຊຸມໄດ້ລົງມະຕິເຫັນດີປ່ຽນຜູ້ສະມາຊິກສະພາບໍລິຫານສະໄໝທີ 3 ຈາກທ່ານ ທ່ານ ຊຸນ ເຟີຍຫູ (SUN Feihu) ມາເປັນ ທ່ານ ເຫຼີ ເຢົ້າຫາຍ (LEI Yaohai) ອາຍຸການດຳລົງຕຳແໜ່ງ ແມ່ນເທົ່າກັບສະພາບໍລິຫານສະໄໝທີ 3.

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

<u>ວາລະທີ 9: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.</u>

ກອງປະຊຸມໄດ້ລົງມະຕິເຫັນດີດັດແກ້ກົດລະບຽບບໍລິສັດ ມາດຕາ 9 ແລະ ມາດຕາ 12 ດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 143.515.100 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ o ສຽງ (ຮຸ້ນ), ເທົ່າກັບ o ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕ້ານລາຍງານ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ວຽງຈັນເຊັນເຕີ ຈຳກັດ ມະຫາຊົນ Vientiane Center Lao Public Company

Wang Wei Kun